| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ອະນຸຍາດດຳເນີນທຸລະກິດ ໂຮງຮຽນສອນຂັບລົດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| VCPG-PWTD-18 | 11.01.2018 | ພະແນກໂຍທາທິການ ແລະ ຂົນສົ່ງ, ນະຄອນຫລວງວຽງຈັນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | H - ການຂົນສົ່ງ ແລະ ສາງສິນຄ້າ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ໂຮງຮຽນສອນຂັບລົດ ແມ່ນສະຖານທີ່ໃຫ້ຄວາມຮູ້ທັງທາງດ້ານທິດສະດີ ແລະ ປະຕິບັດຕໍ່ຜູ້ທີ່ຈະເສັງໃບຂັບຂີ່ ດັ່ງນັ້ນ ເພື່ອຮັບປະກັນວ່າ ການຝຶກອົບຮົມແມ່ນຈະໄດ້ມາດຕະຖານຕາມຫຼັກສູດ ທີ່ກຳນົດໄວ້ຂອງຂະແໜງໂຍທາທິການ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ໃຫ້ ຜູ້ໃຫ້ບໍລິການດັ່ງກ່າວ ຂໍໃບອະນຸຍາດນີ້ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງ ແລະ ດຳເນີນກິດຈະການ ໂຮງຮຽນສອນຂັບລົດ ທັງທີ່ເປັນພາຫະນະທົ່ວໄປ ແລະ ພາຫະນະກົນຈັກໜັກ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ | 30 | |

| ຄຸນະສົມບັດ ແລະ ເອກະສານປະກອບ | |
|---|---|
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ມີຄະນະອໍານວຍການ ທີ່ມີລະດັບການສຶກສາຈົບມັດທະຍົມສົມບູນ ຫຼື ມີຄວາມຮູ້ດ້ານວິຊາສະເພາະກົນຈັກພາຫະນະຊັ້ນກາງຂຶ້ນໄປ ແລະ ຕ້ອງໄດ້ຜ່ານການຝຶກອົບຮົມ ກ່ຽວກັບ ລະບຽບກົດໝາຍ; 2. ມີຄູສອນພາກທິດສະດີຢ່າງໜ້ອຍ 1 ຄົນ ຈົບວິຊາສະເພາະກົນຈັກ ຜ່ານການຝຶກອົບຮົມການສິດສອນ ຢ່າງຖືກຕ້ອງ ແລະ ມີຄູສອນພາກປະຕິບັດຕົວຈິງ ຢ່າງໜ້ອຍ 2 ຄົນ ທີ່ມີໃບຂັບຂີ່ປະເພດ C ຢ່າງຕໍ່າ ແລະ ມີປະສົບການໃນການຂັບຂີ່ຢ່າງໜ້ອຍ 5 ປີ; 3. ມີທີ່ຕັ້ງ ແລະ ສິ່ງປຸກສ້າງຢ່າງຖາວອນ, ມີຫ້ອງການ, ຫ້ອງຮຽນທີ່ປະກອບດ້ວຍອຸປະກອນ ການສິດສອນຢ່າງຄົບຊຸດ ແລະ ທັນສະໄໝ, ມີເດີ່ນຝຶກແອບຢ່າງກວ້າງຂວາງ ສ້າງເປັນສວນຈາລະຈອນ;  4. ມີພາຫະນະຮຽນຂັບຢ່າງໜ້ອຍ 3 ຄັນ ສໍາລັບ ການສອນຂັບລົດພາຫະນະທົ່ວໄປ ຫຼື ມີພາຫະນະຮຽນຂັບ 5 ຊະນິດຂຶ້ນໄປ;  5. ມີເອກະສານສິດສອນຜ່ານການຮັບຮູ້ ພ້ອມຫຼັກສູດທີ່ສອດຄ່ອງກັບ ຂໍ້ກໍານົດໃນ ຂໍ້ກໍານົດ ເລກທີ 2326/ຄຂປກ; 6. ມີທຶນຈົດທະບຽນ ຫຼາຍກວ່າ 8 ຕື້ກີບ ສໍາລັບ ພາຫະນະທົ່ວໄປ ຫຼື ຫຼາຍກວ່າ 15 ຕື້ກີບ ສໍາລັບ ພາຫະນະກົນຈັກໜັກ; 7. ກໍລະນີເປັນໂຮງຮຽນສອນຂັບລົດພາຫະນະທົ່ວໄປ ແມ່ນເປັນການລົງທຶນພາຍໃນສົມທົບກັບ ຕ່າງປະເທດ ພາຍໃນ 51% ແລະ ຕ່າງປະເທດ 49% ແຕ່ກໍລະນີ ໂຮງຮຽນສອນຂັບລົດພາຫະນະກົນຈັກໜັກ ຕ່າງປະເທດສາມາດລົງທຶນໄດ້ 100% |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດ ໃນກໍລະນີ ຜູ້ຮ້ອງຂໍບໍ່ສາມາດປະຕິບັດຕາມເງື່ອນໄຂທີ່ລະບຸໄວ້ |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ຕ້ອງຍື່ນຂໍສືບຕໍ່ດໍາເນີນທຸລະກິດ ຕ້ອງໄດ້ຍື່ນຄໍາຮ້ອງຂໍສືບຕໍ່ລ່ວງໜ້າ ຢ່າງໜ້ອຍ 30 ວັນ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທໍານຽມ | | | | |
|---|---|---|---|---|
| ແມ່ນແລ້ວ | 0.00 | 200000.00 | 0.00 | 200000.00 |
| **ຄໍາເຫັນ** | ອີງຕາມລັດຖະບັນຍັດປະທານປະເທດ ເລກທີ 003/ປທ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 200000.00 | 0.00 | 200000.00 |
| **ຄໍາເຫັນ** | ອີງຕາມລັດຖະບັນຍັດປະທານປະເທດ ເລກທີ 003/ປທ | | | |

| ນິຕິກໍາທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ນິຕິກໍາ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ຂໍ້ກໍານົດ ກ່ຽວກັບການອະນຸຍາດສ້າງຕັ້ງໂຮງຮຽນ ແລະ ດໍາເນີນທຸລະກິດສອນຂັບລົດ | 2326/ຄຂປ ກ | 21.07.2000 | ມາດຕາ 4 - ມາດຕາ 8: ລະບຽບການ ຂໍອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດ |
| ລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບ ຄຸມ ໃນຂະແໜງໂຍທາທິການ ແລະ ຂົນສົ່ງ | 13779/ຍທ ຂ | 21.08.2015 | |
| ກົດໝາຍວ່າດ້ວຍ ການຈໍລະຈອນທາງບົກ(ສະບັບປັບປຸງ) | 23/NA | 12.12.2012 | ພາກທີ IV:ທຸລະກິດກ່ຽວກັບການຈໍລະຈອນທາງບົກ ມາດຕາ 43 - ມາດຕາ 44 ປະເພດທຸລະກິດ ກ່ຽວກັບການຈາລາຈອນທາງບົກ |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ບົດລາຍງານການເຄື່ອນໄຫວທຸລະກິດ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈໍາກັດ |

| ເອກະສານປະກອບ |
| --- |
| ຮູບຖ່າຍຂອງອໍານວຍການ |
| ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
| --- | --- | --- |
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 0 | 16 |